## ບົດບາດຂອງພະນັກງານສັງຄົມຂອງທ່ານແມ່ນຫຍັງ?



ພະນັກງານສັງຄົມຂອງທ່ານຈະແຈ້ງບອກທ່ານກ່ຽວກັບການຂົ່ມຂູ່ເຣື່ອງຄວາມປອດພັຍທີ່ຖືກຊີ້ບອກຊຶ່ງນຳພາໃຫ້ລູກຂອງທ່ານຖືກຈັດໃຫ້ຢູ່ໃນການເບິ່ງແຍງດູແລຢູ່ນອກເຮືອນ. ເຂົາເຈົ້າຈະເຮັດວຽກຮ່ວມກັນນຳທ່ານເພື່ອຈະຕີຣາຄາປະເມີນຜົນເບິ່ງຄວາມຕ້ອງການຂອງທ່ານ ແລະ ຊ່ວຍເຫລືອທ່ານດ້ວຍການບໍຣິການເພື່ອຈະມຸ່ງໃສ່ການລຸດຜ່ອນ ຫລື ການຕັດການຂົ່ມຂູ່ຕໍ່ຄວາມປອດພັຍອອກໄປ.

## ການຟ້ອງຮ້ອງເຣື່ອງການຫວັງເພິ່ງແມ່ນຫຍັງ?

ການຟ້ອງຮ້ອງເຣື່ອງການຫັວງເພິ່ງແມ່ນຫນັງສືຄຳຮ້ອງເຖິງສານກ່ຽວກັບຄວາມຫ່ວງໃຍວ່າລູກຂອງທ່ານໄດ້ຖືກກົດຂີ່ຂົ່ມເຫັງ, ບໍ່ເອົາໃຈໃສ່ນຳ ຫລື ປ່ອຍປະໄປ ແລະບໍ່ມີພໍ່ແມ່ທີ່ຈະສາມາດເບິ່ງແຍງດູແລລູກຂອງທ່ານໄດ້ຢ່າງປອດພັຍ. ການຟ້ອງຮ້ອງເຣື່ອງການຫວັງເພິ່ງຈະຂໍໃຫ້ສານເຂົ້າໄປ ແລະ ປົກປ້ອງລູກຂອງທ່ານຈາກອັນຕະລາຍ ແລະ ໃຫ້ຮັດຮັບເອົາຄວາມຄຸ້ມຄອງຂອງລູກຂອງທ່ານຕາມກົດຫມາຍເປັນຊົ່ວຄາວ. ການຟ້ອງຮ້ອງເຣື່ອງການຫວັງເພິ່ງຈະຖືກຍື່ນໂດຍຜະແນກປົກຄອງເດັກນ້ອຍເມື່ອເວລາເດັກນ້ອຍໄດ້ຖືກເຊື່ອວ່າຈະຕົກຢູ່ໃນອັນຕະຣາຍທີ່ລໍຖ້າຈະເກີດຂື້ນໄດ້ ຫລື ໃນປັດຈຸບັນ. ເດັກນ້ອຍຈະຖືກສົ່ງກັບຄືນມາເຮືອນເມື່ອເວລາການຂົ່ມຂູ່ຕໍ່ຄວາມປອດພັຍທີ່ຖືກຊີ້ບອກສາມາດຖືກຄວບຄຸມ ແລະ ກຳກັບນຳໄດ້ຢ່າງປອດພັຍຢູ່ໃນເຮືອນຂອງຄອບຄົວ.

## ທະນາຍຄວາມ

ທ່ານມີສິດທີ່ຈະມີທະນາຍຄວາມ. ຖ້າຫາກວ່າທ່ານບໍ່ສາມາດຈ້າງທະນາຍຄວາມຂອງທ່ານເອງໄດ້ຍ້ອນຣາຍໄດ້ຂອງທ່ານ, ສານຈະແຕ່ງຕັ້ງຄົນນຶ່ງໃຫ້ທ່ານ.

## ພະນັກງານ CASA/GAL

CASA (ຜູ້ຊ່ວຍເຫລືອພິເສດທີ່ສານແຕ່ງຕັ້ງໃຫ້) ແລະ GAL (ຜູ້ປົກຄອງເອດລິເຕິມ) ໄດ້ຖືກແຕ່ງຕັ້ງໂດຍຈ່າສານເພື່ອຈະອູ້ມຊູຊ່ວຍເຫລືອລູກຂອງທ່ານ. ຄົນ CASA ຫລື GAL ຈະບອກຈ່າສານໃນການຟັງເຣື່ອງຢູ່ສານສິ່ງທີ່ເຂົາເຈົ້າເຊື່ອວ່າຈະເປັນຜົນປະໂຍດທີ່ດີທີ່ສຸດຂອງລູກຂອງທ່ານ ແລະ ສິ່ງທີ່ລູກຂອງທ່ານຕ້ອງການ. ພະນັກງານ CASA ຫລື GAL ຈະເຮັດວຽກເພື່ອໃຫ້ແນ່ໃຈວ່າລູກຂອງທ່ານໄດ້ຖືກພິຈາຣະນາເບິ່ງໃນການຕັດສິນທຸກໆຢ່າງທີ່ສານໄດ້ເຮັດລົງໄປ.



## ການຕິດຕໍ່ສຳຄັນ

ຊື່ຂອງພະນັກງານສັງຄົມ:

---

### ຕ້ອງການທະນາຍຄວາມບໍ່?

ຫ້ອງການຂອງທະນາຍຄວາມທີ່ຖືກແຕ່ງຕັ້ງ:

ຫ້ອງການຕໍ່ສູ້ໃຫ້ສາທາຣະນະຊົນ
ໂທຣະສັບ: 360-586-3164
ອີແມລ: opd@opd.wa.gov

### ຊື່ ແລະ ເລກໂທຣະສັບຂອງ CASA/GAL:

---

---

> **ຜູ້ອູ້ມຊູສະນັບສະນູນຄອບຄົວ ແລະ ເດັກນ້ອຍ**
ສືບສວນຄຳຮ້ອງທຸກກ່ຽວກັບການກະທຳ ຫລື ການບໍ່ກະທຳຂອງຫ້ອງການທີ່ກ່ຽວພັນເດັກນ້ອຍ ຫລື ພໍ່ແມ່ນຳຜູ້ທີ່ໄດ້ຖືກພົວພັນນຳຜະແນກປ້ອງກັນເດັກນ້ອຍ ຫລື ຄວາມສຸກທຸກຂອງເດັກນ້ອຍ.
ເລກໂທຟຣີ: 1-800-571-7321
ໂທຣະສັບ: (206) 439-3870

> **ສາຍດ່ວນຂອງຜະແນກປົກຄອງເດັກນ້ອຍ**
ໂທຫາ 1-866-ENDHARM (1-866-363-4276)
*24 ຊົ່ວໂມງ/ເຈັດວັນຕໍ່ອາທິດສາຍດ່ວນທີ່ຈະຕິດຕໍ່ທ່ານໂດຍກົງໂລດໄປຫາຫ້ອງການທ້ອງຖິ່ນບ່ອນທີ່ເຫມາະສົມ.*

> ທ່ານຍັງສາມາດຕິດຕໍ່ຫາ**ຫ້ອງການພົວພັນນຳປະຊາຊົນຂອງຜະແນກປົກຄອງເດັກນ້ອຍ**ໄດ້ທີ່ 1-800-723-4831 ເພື່ອຈະເຂົ້າໃຈການດຳເນີນການຮ້ອງທຸກທີ່ເປັນທາງການ.

Washington State
Department of Social & Health Services
DSHS 22-1499 LA (1/13)



# ຄວາມເຂົ້າໃຈໃນການດຳເນີນການຂອງສານເຣື່ອງການຫວັງເພິ່ງ



ທ່ານມີສິດທິທີ່ຈະ:

- ຖືກເຮັດນຳດ້ວຍຄວາມນັບຖື
- ຮູ້ຈັກວ່າແມ່ນຫຍັງເກີດຂື້ນນຳສຳນວນຄະດີຂອງທ່ານ ແລະ ລູກຂອງທ່ານ
- ໃຫ້ຣາຍຣະອຽດຂອງທ່ານຖືກເກັບຮັກສາໄວ້ເປັນຄວາມລັບ

ທ່ານມີຄວາມຮັບຜິດຊອບທີ່ຈະ:

- ເຂົ້າຮ່ວມໃນການປະຊຸມວາງແຜນຮ່ວມກັນກ່ຽວກັບວ່າທ່ານຢາກໃຫ້ລູກຂອງທ່ານຢູ່ໃສ
- ປ້ຽມຢາມລູກຂອງທ່ານ
- ບອກໃຫ້ພະນັກງານສັງຄົມຂອງທ່ານຮູ້ຈັກກ່ຽວກັບການປ່ຽນແປງໃນເລກໂທຣະສັບ ແລະ ທີ່ຢູ່
- ອະທິບາຍສິ່ງທີ່ທ່ານຕ້ອງການເພື່ອຈະເປັນພໍ່ແມ່ທີ່ປອດພັຍ

ບົດບາດຂອງທ່ານແມ່ນທີ່ຈະ:

- ສະແດງຄວາມປະສົງຂອງທ່ານອອກມາສຳລັບການວາງແຜນສຳລັບລູກຂອງທ່ານ
- ເວົ້າ ແລະ ກ່ຽວພັນນຳແຜນການເອກສານຂອງທ່ານ

## ສິ່ງສຳຄັນທີ່ຈະຮູ້ຈັກ

ໃນທຸກໆເວລາໃນລະຫວ່າງການດຳເນີນການຂອງສານ, ຈ່າສານສາມາດຕັດສິນວ່າລູກຂອງທ່ານສາມາດຖືກສົ່ງກັບຄືນມາເຮືອນໄດ້ຢ່າງປອດໄພ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າທ່ານບໍ່ສາມາດທີ່ຈະທຳການປ່ຽນແປງທີ່ຈຳເປັນເພື່ອຈະຮັກສາລູກຂອງທ່ານໃຫ້ປອດໄພ, ທ່ານສາມາດສູນເສຍສິດທິທີ່ຈະລ້ຽງລູກຄົນນັ້ນ. ພະແນກປົກຄອງເດັກນ້ອຍຈະສະເນີເອື້ອເຟື້ອການອູ້ມຊູ ແລະ ການບໍລິການໃຫ້ແກ່ທ່ານເພື່ອຈະຊ່ວຍເຫລືອທ່ານໃຫ້ຫລີກເວັ້ນຜົນອອກມາອັນນີ້ ແລະ ເຕົ້າໂຮມກັນໃຫມ່ນຳລູກຂອງທ່ານ.

# ເສັ້ນເວລາຂອງການດຳເນີນການຂອງສານເຣື່ອງການຫວັງເຜີງ

ກະຣຸນາໃຫ້ແນ່ໃຈວ່າທ່ານໄດ້ເວົ້າລົມນຳທະນາຍຄວາມຂອງທ່ານກ່ຽວການຟັງເຣື່ອງຢູ່ສານຂອງທ່ານ.

### ການສົ່ງຕໍ່ໄປຫາພະແນກ CPS

ການດຳເນີນການເລີ້ມຕົ້ນຈາກບ່ອນນີ້

ພະແນກ CPS ໄດ້ຮັບການສົ່ງຕໍ່ໄປຫາກ່ຽວກັບການກົດຂີ່ຂົ່ມເຫັງ ຫລື ການປ່ອຍປະລະເລີຍຂອງເດັກນ້ອຍ. ການສົ່ງຕໍ່ໄດ້ຖືກຕີຣາຄາເບິ່ງ ແລະ ຖືກຄັດເຂົ້າໃຫ້ມີການສືບສວນ ຫລື ຖືກຄັດອອກໄປ. ເດັກນ້ອຍໄດ້ຖືກເອົາອອກຈາກເຮືອນໂດຍພະແນກ CPS ຫລື ເຈົ້າຫນ້າທີ່ຕຳຣວດຖ້າຫາກວ່າມັນເຊື່ອວ່າຈຳເປັນທີ່ຈະປົກປ້ອງເດັກນ້ອຍຈາກອັນຕະຣາຍທີ່ໃກ້ຈະເກີດຂຶ້ນ.

**72 ຊົ່ວໂມງສູງສຸດ**

### ເດັກນ້ອຍໄດ້ຖືກຈັດໃຫ້ຢູ່ໃນຄວາມຄຸ້ມຄອງປ້ອງກັນ

ເດັກນ້ອຍໄດ້ຖືກເອົາອອກຈາກການເບິ່ງແຍງດູແລຂອງທ່ານ ແລະ ຖືກຈັດໃຫ້ຢູ່ໃນການເບິ່ງແຍງດູແລນອກເຮືອນບໍ່ວ່າຈະແມ່ນຢູ່ນຳພີ່ນ້ອງ ຫລື ເຮືອນລ້ຽງເດັກກຳພ້າ. ການຟັງເຣື່ອງກ່ຽວກັບການເບິ່ງແຍງດູແລຢູ່ບ່ອນພັກເຊົາຈະຖືກຈັດຂຶ້ນພາຍໃນ 72 ຊົ່ວໂມງທີ່ລູກຂອງທ່ານໄດ້ຖືກເອົາອອກຈາກເຮືອນ.

### ການຟັງເຣື່ອງກ່ຽວກັບການເບິ່ງແຍງດູແລຢູ່ບ່ອນພັກເຊົາ

(ລູກຂອງທ່ານສາມາດຖືກສົ່ງກັບຄືນມາເຮືອນຫລັງຈາກການຟັງເຣື່ອງຈາກສານທີ່ຖືກບົ່ງໄວ້ເທື່ອໃດເທື່ອນຶ່ງ)

ໃນເວລາຟັງເຣື່ອງອັນນີ້ທ່ານສາມາດຂໍໃຫ້ສານທີ່ຈະແຕ່ງຕັ້ງທະນາຍຄວາມຄົນນຶ່ງໃຫ້ທ່ານ. ຈ່າສານຈະຕັດສິນວ່າລູກຂອງທ່ານຕ້ອງຍັງຢູ່ໃນການເບິ່ງແຍງດູແລຢູ່ນອກເຮືອນຢູ່ບໍ່ ຫລື ວ່າສາມາດຖືກສົ່ງກັບຄືນມາຫາທ່ານຢ່າງປອດພັຍ. ທ່ານສາມາດຂໍໃຫ້ລູກຂອງທ່ານຢູ່ນຳພີ່ນ້ອງແທນທີ່ວ່າຈະຢູ່ໃນເຮືອນລ້ຽງເດັກກຳພ້າ. ຖ້າຫາກວ່າລູກຂອງທ່ານຫາກຍັງຢູ່ໃນການເບິ່ງແຍງດູແລຢູ່ພະນັກງານສັງຄົມຂອງທ່ານຈະກໍ່ຕັ້ງແຜນການປິ່ນປົວເປັນປົກກະຕິ.

**30 ວັນ**

### ການຟັງເຣື່ອງການເບິ່ງແຍງດູແລຢູ່ບ່ອນພັກເຊົາຕໍ່ໄປ

(ຢູ່ໃນສານບາງບ່ອນ)

ສານຕັດສິນໃຫມ່ອີກຖ້າຫາກວ່າລູກຂອງທ່ານຈະຍັງຢູ່ໃນການເບິ່ງແຍງດູແລຢູ່ນອກເຮືອນ ຫລື ຈະຖືກສົ່ງກັບຄືນໄປຫາທ່ານ. ສານກວດເບິ່ງແຜນການປິ່ນປົວຂອງທ່ານຄືນ ແລະ ວ່າລູກຂອງທ່ານຈະອາສັຍຢູ່ໃສ.

**90 ວັນ**

### ການຟັງເຣື່ອງຂອກຫາຄວາມຈິງ

(ພາຍໃນ 75 ວັນຂອງການຍື່ນຟ້ອງຮ້ອງເຣື່ອງການຫວັງເຜີງ)

ຖ້າຫາກວ່າທ່ານດຳເນີນທີ່ຈະຄັດຄ້ານຕໍ່ການຫວັງເຜີງ, ສານຈະເອົາຄຳໃຫ້ການຈາກທ່ານ ແລະ ຄົນອື່ນກ່ຽວກັບການອິ່ມອູ່ຕໍ່ຄວາມປອດພັຍຂອງເດັກນ້ອຍທີ່ຖືກຊີ້ບອກຢູ່ໃນຄຳຟ້ອງຮ້ອງເຣື່ອງການຫວັງເຜີງ. ສານຈະອອກຄຳສັ່ງວ່າລູກຂອງທ່ານເປັນເດັກຫວັງເຜີງຂອງຣັດ ຫລື ສົ່ງໃຫ້ລູກຂອງທ່ານຖືກສົ່ງກັບຄືນມາສູ່ການເບິ່ງແຍງດູແລຂອງທ່ານ ແລະ ເລີກລົ້ມການຫວັງເຜີງ ຫລື ສັ່ງໃຫ້ລູກຂອງທ່ານວ່າປອດພັຍພໍທີ່ຈະເມືອເຮືອນດ້ວຍການຫວັງເຜີງຢູ່ໃນເຮືອນທີ່ມີການເບິ່ງນຳຈາກສານ.

### ການຟັງເຣື່ອງຕັດສິນ

(ພາຍໃນ 90 ວັນຂອງການຍື່ນຟ້ອງຮ້ອງເຣື່ອງການຫວັງເຜີງ)

ຖ້າຫາກວ່າລູກຂອງທ່ານໄດ້ຖືກແຈ້ງວ່າເປັນຄົນຫວັງເຜີງ, ສານຈະສັ່ງໃຫ້ທ່ານເຂົ້າຮ່ວມໃນການບໍຣິການເພື່ອຈະລຸດການອິ່ມອູ່ເຣື່ອງຄວາມປອດພັຍລົງຢູ່ໃນເຮືອນຂອງທ່ານ. ສານຍັງຈະເວົ້າເຖິງການຈັດໃຫ້ຢູ່ ຫລື ບັນຫາເຣື່ອງການປິ່ນປົວທຸກໆຢ່າງໃນການຟັງເຣື່ອງອັນນີ້.

**6 ເດືອນ**

### ການຟັງເຣື່ອງການກວດເບິ່ງການຫວັງເຜີງຄືນເທື່ອທຳອິດ

ສານກວດເບິ່ງຄວາມຄືບຫນ້ານຳການບໍຣິການຂອງທ່ານຄືນ ແລະ ພິຈາຣະນາວ່າຈະມີການບໍຣິການເພີ້ມເຕີມ ຫລື ບໍ່ ຊຶ່ງຈະສາມາດເຮັດໃຫ້ຄວາມສາມາດຂອງທ່ານໃຫ້ເຂັ້ມແຂງເພື່ອຈະເອົາເຮືອນປອດພັຍໃຫ້ສຳລັບຂອງລູກຂອງທ່ານ.

ສານອາດຈະພິຈາຣະນາວ່າມັນປອດພັຍແລ້ວດຽວນີ້ສຳລັບລູກຂອງທ່ານທີ່ຈະກັບຄືນມາເຮືອນດ້ວຍການຫວັງເຜີງຢູ່ໃນເຮືອນທີ່ມີການເບິ່ງນຳຈາກສານ.

**12 ເດືອນ**

### ການຟັງເຣື່ອງການວາງແຜນເຣື່ອງການອາສັຍຢູ່ຖາວອນ

ສານຈະຕັດສິນວ່າແຜນການອາສັຍຢູ່ຖາວອນຂອງລູກຂອງທ່ານຄວນຈະເປັນແນວໃດ ແລະ ອີກຢ່າງນຶ່ງແຜນການປັດຈຸບັນຂອງລູກຂອງທ່ານຄວນຈະເປັນແນວໃດຖ້າຫາກວ່າທ່ານບໍ່ສາມາດທີ່ຈະລ້ຽງລູກຂອງທ່ານຢ່າງປອດພັຍ.

**18 ເດືອນ**

### ການຟັງເຣື່ອງການກວດເບິ່ງການຫວັງເຜີງຄືນ

(ດຳເນີນຕໍ່ໄປທຸກໆ 6 ເດືອນ)

ສານກວດເບິ່ງການເຂົ້າຮ່ວມໃນການບໍຣິການຂອງທ່ານຄືນ ແລະ ຖ້າຫາກວ່າທ່ານບໍ່ເຮັດຄວາມຄືບຫນ້າພຽງພໍມາຮອດຈຸດນີ້ ຫລື ບໍ່, ສານຈະອອກຄຳສັ່ງ (ຢູ່ໃນບາງກໍຣະນີ) ວ່າຣັດຍື່ນຄຳຟ້ອງຮ້ອງເພື່ອຈະຕັດສິດທິພໍ່ແມ່ຂອງທ່ານ.

ຖ້າຫາກວ່າຄຳຟ້ອງຮ້ອງຂໍເອົາການຕັດໄດ້ຖືກຍື່ນມັນຈະມີການຂຶ້ນສານບ່ອນທີ່ທະນາຍຄວາມຂອງທ່ານ ແລະ ທະນາຍຄວາມຂອງຣັດຈະສະເນີຫລັກຖານໃສ່ສຳນວນຄະດີຂອງທ່ານ. ຈ່າສານຈະຕັດສິນວ່າຈະຕັດສິດທິຂອງພໍ່ແມ່ຂອງທ່ານ ຫລື ບໍ່.

## ການປະຊຸມການວາງແຜນຮ່ວມກັນ

ການກ່ຽວພັນນຳຂອງທ່ານໃນການປະຊຸມການວາງແຜນຮ່ວມກັນຂອງພະແນກປົກຄອງເດັກນ້ອຍແມ່ນສຳຄັນທີ່ສຸດ. ທ່ານຈະຊ່ວຍອອກແບບແຜນການເອກສານຄອບຄົວຂອງທ່ານເພື່ອຈະຕັດການອິ່ມອູ່ຕໍ່ຄວາມປອດພັຍຂອງທ່ານອອກໄປ ແລະ ກໍ່ຕັ້ງຈຸດເປົ້າຫມາຍການອາສັຍຢູ່ຖາວອນສຳລັບລູກຂອງທ່ານ.

### ການທຳການຕັດສິນຂອງຄະນະທີມງານຂອງຄອບຄົວ (FTDM)

ການປະຊຸມ FTDM ເກີດຂຶ້ນຕະລອດຊີວິດຂອງສຳນວນຄະດີ. ເຂົາເຈົ້ານຳມາພ້ອມກັນສະມາຊິກຄອບຄົວຂອງທ່ານ ແລະ ການອູ້ມຊູລວມທັງຜູ້ຊ່ຽວຊານທີ່ກ່ຽວພັນນຳເພື່ອຈະໃຫ້ຄຳແນະນຳກ່ຽວກັບການຈັດຫາໃຫ້ຢູ່ຊົ່ວຄາວ ແລະ ຖາວອນຂອງລູກຂອງທ່ານ.

### ຄະນະທີມງານປ້ອງກັນເດັກນ້ອຍ (CPT)

ຄະນະທີມງານປ້ອງກັນເດັກນ້ອຍລວມເອົາທ່ານຫມໍ, ພະນັກງານໂຮງຮຽນ, ຜູ້ປະຕິບັດສຸຂະພາບໂຣກຈິດ ແລະ ຜູ້ຊ່ຽວຊານຊຸມນຸມຊົນອື່ນໆ. ດ້ວຍການຮ່ວມກັນບຸກຄົນເຫລົ່ານີ້ເອົາການປຶກສາທີ່ເປັນຄວາມລັບໃຫ້ ແລະ ຄຳແນະນຳໃຫ້ພະແນກປົກຄອງເດັກນ້ອຍກ່ຽວກັບສຳນວນຄະດີຊຶ່ງມີການສ່ຽງອັນຕະຣາຍທີ່ໃກ້ຈະເກີດຂຶ້ນຕໍ່ເດັກນ້ອຍອາຍຸຫົກປີ ແລະ ອ່ອນກວ່າ, ຫລື ໃນນັ້ນມັນມີຄວາມຄັດແຍ້ງກ່ຽວກັບຄວາມຕ້ອງການສຳລັບການຈັດຫາໃຫ້ຢູ່ນອກເຮືອນ.

### ການວາງແຜນຖາວອນ ແລະ ໃນປັດຈຸບັນ

ເພີ້ມເຕີມໃສ່ການເຮັດວຽກນຳທ່ານເພື່ອຈະລຸດຜ່ອນ ຫລື ຕັດການອິ່ມອູ່ຕໍ່ຄວາມປອດພັຍອອກໄປ, ພະນັກງານຂອງພະແນກປົກຄອງເດັກນ້ອຍຈະເຮັດວຽກນຳທ່ານເພື່ອຈະອອກແບບຈຸດເປົ້າຫມາຍຂອງແຜນການເອກສານສຳລັບການເບິ່ງແຍງດູແລຣະຍະສັ້ນ ແລະ ຣະຍະຍາວ. ຈຸດເປົ້າຫມາຍອັນທຳອິດຂອງພວກເຮົາແມ່ນເພື່ອຈະສົ່ງລູກຂອງທ່ານກັບຄືນມາສູ່ການເບິ່ງແຍງດູແລຂອງທ່ານ, ແຕ່ວ່າພວກເຮົາຍັງຈະຕ້ອງມີແຜນການ (ຄຽງຄູ່ກັນໄປ) ອີກແຜນການນຶ່ງຖ້າຫາກວ່າຈຸດເປົ້າຫມາຍຂອງແຜນການເອກສານບໍ່ບັນລຸຜົນສຳເຣັດ.

### ອົງການແນະນຳຄວາມສຸກທຸກຂອງເດັກນ້ອຍເຜົ່າອິນດຽນທ້ອງຖິ່ນ (LICWAC)

ຖ້າຫາກວ່າທ່ານຫລືລູກຂອງທ່ານໄດ້ຖືກຊີ້ຕົວວ່າເປັນຄົນອະເມຣິກັນດັ້ງເດີມ ຫລື ຄົນອະເມຣິກັນດັ້ງເດີມທີ່ອາດຈະເປັນໄປໄດ້ເອກສານຂອງທ່ານຈະຖືກໂອ້ລົມກັນໂດຍອົງການແນະນຳຄວາມສຸກທຸກຂອງເດັກນ້ອຍເຜົ່າອິນດຽນທ້ອງຖິ່ນ. LICWAC ເປັນກຸ່ມຂອງຜູ້ອາສາສະມັກຜູ້ທີ່ປະຊຸມກັນ ແລະ ປຶກສາກ່ຽວກັບເອກສານຂອງພະແນກ CA ເມື່ອເວລາສະພາບຄົນອະເມຣິກັນດັ້ງເດີມຂອງທ່ານບໍ່ທັນໄດ້ຖືກພົບເຫັນເທື່ອຫລືວ່າເມື່ອຊົນເຜົ່າຂອງເດັກນ້ອຍບໍ່ມີໄວ້ໃຫ້.